ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ຫ້ອງການກະຊວງ

ເລກທີ 2663 /ຫກງ

ນະຄອນຫຼວງວຽງຈັນ, ວັນທີ 04 ພະຈິກ ໒໐໒໑

# ໜັງສືແຈ້ງເຊີນປະມູນ

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຫ້ອງການກະຊວງການເງິນ ສະບັບເລກທີ 5050/ກງ, ລົງວັນທີ 24 ທັນວາ 2019;
- ອີງຕາມ ຂໍ້ຕົກລົງວ່າດວ້ຍການແຕ່ງຕັ້ງຄະນະຮັບຜິດຊອບເຈລະຈາ ຈັດຊື້-ຈັດຈ້າງ ເຄື່ອງອຸປະກອນ, ຊຸດຄຳສັ່ງໂປຣແກຣມ ແລະ ພັດທະນາຖານຂໍ້ມູນລວມສູນ ຂອງກະຊວງການເງິນ ສະບັບເລກທີ 5083/ກງ, ລົງວັນທີ 12 ຕຸລາ2021;
- ອີງຕາມ ໜັງສືສະເໜີຂອງສະຖາບັນພັດທະນາຂໍ້ມູນຂ່າວສານການເງິນ ສະບັບເລກທີ 0564/ສພຂງ ລົງວັນທີ 04 ພະຈິກ 2021.

ຫ້ອງການກະຊວງການເງິນ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານຜູ້ທີ່ມີຄວາມສົນໃຈ ປະມູນຈັດຊື້-ຈັດຈ້າງ ຊາບວ່າ:

1. ຫ້ອງການກະຊວງການເງິນ ໄດ້ຮັບອະນຸມັດໃຫ້ນຳໃຊ້ງົບປະມານປະຈຳປີ 2021 ບ້ວງທຶນເປັນທຶນສະໄໝ ເພື່ອດຳເນີນການຈັດຊື້-ຈັດຈ້າງ ບໍລິສັດຜູ້ສະໜອງ ອຸປະກອນ (Hardware) ແລະ ຊຸດຄຳສັ່ງໂປຣແກຣມ (Soft ware) ສຳລັບລະບົບຖານຂໍ້ມູນລວມສູນຂະແໜງການເງິນພາກລັດ ດ້ວຍຮູບແບບເປີດກ້ວາງ, ສົມທຽບລາຄາ ໂດຍປະກາດຜ່ານສື່ໜັງສືພິມ ແລະ ເວບໄຊ;
2. ການປະມູນຄັ້ງນີ້ ຈະດຳເນີນຕາມຂັ້ນຕອນ, ຕາມກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ລະບຽບການຈັດຕັ້ງປະຕິບັດຄຳແນະນຳ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ບໍລິສັດ/ວິສາຫະກິດ ທີ່ມີຄວາມສົນໃຈ ເຂົ້າຮ່ວມໃນການປະມູນຄັ້ງນີ້ ຕ້ອງມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດຫມາຍຂອງ ສປປ ລາວ ກ່ຽວກັບການສະໜອງອຸປະກອນ ແລະ ພັດທະນາລະບົບໄອຊີທີ, ມີຫນັງສືຢັ້ງຢືນການເສຍພັນທະສ່ວຍສາອາກອນປະຈຳປີ 2021, ຖ້າບໍ່ມີ ໃຫ້ພິມໃບແຈ້ງມອບອາກອນທັງໝົດໃນປີ 2021 ມາແທນ;
4. ບໍລິສັດ/ວິສາຫະກິດ ທີ່ມີຄວາມສົນໃຈຊື້ຊອງປະມູນ ສາມາດຊື້ໄດ້ທີ່ສະຖາບັນພັດທະນາຂໍ້ມູນຂ່າວສານການເງິນກະຊວງການເງິນ, ບ້ານໂພນໄຊ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ເບີໂທ: 021 417766, ຂາຍຊອງປະມູນ 1,500,000 ກີບ, ເລີ່ມແຕ່ວັນທີ 4/11/2021 ຫາ ວັນທີ 15/11/2021, ຊອງປະມູນຕ້ອງສົ່ງກ່ອນເວລາ 13:45 ໂມງ ແລະ ຈະໄດ້ເປີດຊອງປະມູນໃນເວລາ 15:00 ໂມງ ຂອງວັນດຽວກັນ ທີ່ສະຖາບັນພັດທະນາຂໍ້ມູນຂ່າວສານການເງິນ ກະຊວງການເງິນ ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງບໍລິສັດ/ວິສາຫະກິດ ທີ່ໄດ້ຍື່ນຊອງປະມູນ, ຖ້າສົ່ງກາຍກຳນົດເວລາ ຈະບໍ່ຮັບພິຈາລະນາ;
5. ສຳລັບເງື່ອນໄຂ, ຄຳແນະນຳ ແລະ ແບບຟອມການປະມູນ ໄດ້ຄັດຕິດຊ້ອນທ້າຍມາພ້ອມນີ້;
6. ບໍລິສັດ/ວິສາຫະກິດ ຕ້ອງປະກອບເອກະສານຕາມແບບຟອມແນະນຳ ແລະ ເງື່ອນໄຂທີ່ໄດ້ກຳນົດໄວ້ໃຫ້ຄົບຖ້ວນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຊາບ ແລະ ພິຈາລະນາຕາມທາງຄວນດ້ວຍ.

ຫົວໜ້າຫ້ອງການ

ກະຊວງການເງິນ

ສົມບູນ ອິນທະປັດຖາ